# ການປະຖິ້ມພຣະເຈົ້າ ແລະ ການວິງວອນເພື່ອພວກເຂົາ





ບົດຮຽນທີ 11 ສຳລັບສະບາໂຕທີ 13 ກັນຍາ, 2025



“ແລ້ວໂມເຊກໍກັບເຂົ້າໄປເຝົ້າອົງພຣະຜູ້
ເປັນເຈົ້າ ແລະ ກ່າວແກ່ພຣະອົງວ່າ
ປະຊາຊົນເຫລົ່ານີ້ໄດ້ເຮັດບາບຢ່າງຮ້າຍ
ແຮງຫລາຍ ພວກເຂົາໄດ້ເອົາຄຳຫລໍ່
ເປັນພະ ແລະ ຂາບໄຫວ້, ກະລຸນາຍົກ
ບາບໃຫ້ພວກເຂົາດ້ວຍ; ຖ້າບໍ່ດັ່ງນັ້ນຈົ່ງ
ລຶບຊື່ຂອງຂ້ານ້ອຍອອກຈາກປຶ້ມບັນຊີ
ແຫ່ງຊີວິດປະຊາຊົນຂອງພຣະອົງສາ
ເຖີດ”

ອພຍ 32:31, 32



“ພວກເຂົາໄດ້ປະຖິ້ມການດຳເນີນຊີວິດທີ່ເຮົາໄດ້ສັ່ງພວກເຂົາໃຫ້ປະຕິບັດ ແລະ ພວກເຂົາໄດ້ເອົາຄຳມາຫລໍ່ເປັນຮູບງົວເຖິກນ້ອຍໂຕໜຶ່ງ ແລະ ໄດ້ຂາບໄຫວ້... ” (ອພຍ. 32:8 ).



ຫລັງຈາກທີ່ພວກເຂົາໄດ້ຮັບພຣະບັນຍັດສິບປະການ ໃນຕໍ່ມາບໍ່ດົນ, ພວກເຂົາກໍ່ຊົງໄດ້ຮັບການເຕືອນອີກຄັ້ງວ່າບໍ່ໃຫ້ສ້າງຮູບເຄົາລົບ (ອພຍ. 20:23), ຊາວອິດສະຣາເອນໄດ້ສ້າງງົວເຖິກນ້ອຍໂຕໜຶ່ງ

ໃນການຜະເຊີນກັບການປະຖິ້ມຄວາມເຊື່ອນີ້, ພຣະເຈົ້າໄດ້ຊົງຖາມໂມເຊເພື່ອທີ່ຈະທຳລາຍພວກເຂົາ ແລະ ຈະຊົງສ້າງຊົນຊາດໃໝ່ຂຶ້ນ (ອພຍ. 32:10). ຈາກການຜິດຫວັງຈາກການລະຖິ້ມຄວາມເຊືອຂອງພວກເຂົາ, ໂມເຊໄດ້ຂໍຮ້ອງພຣະເຈົ້າບໍ່ໃຫ້ທຳລາຍພວກເຂົາ ແລະ ຂໍການອະໄພຍະໂທດເຖິງສອງຄັ້ງ .



ການປະຖິ້ມຄວາມເຊື່ອ:

- ຄວາມອ່ອນແອຂອງ ອາໂຣນ (ອພຍ 32:1-5)
- ການສະເຫລີມສະຫລອງລູກງົວທອງຄຳ (ອພຍ 32:6)
- ຄວາມເສື່ອມຊາມ ໃນການຂາບໄຫວ້ຮູບເຄົາລົບ (ອພຍ 32:7-8)

ການວິງວອນ:

- “ຂໍພຣະອົງຊົງປ່ຽນພຣະພິໂລດອັນຮຸນແຮງຂອງພຣະອົງ!” (ອພຍ 32:9-29)
- “ຂໍຊົງລົບຊື່ຂອງຂ້າພະເຈົ້າອອກຈາກປຶ້ມແຫ່ງຊີວິດ!” (ອພຍ 32:30-32)



# ການປະຖິ້ມຄວາມເຊື່ອ

# ຄວາມອ່ອນແອຂອງອາໂຣນ

“ແລ້ວອາໂຣນກໍ່ໄດ້ສ້າງແທ່ນບູຊາແທ່ນໜຶ່ງໄວ້ຕໍ່ໜ້າຮູບງົວຄຳ ແລະ ປະກາດວ່າ ມື້ອື່ນຈະມີການກິນລ້ຽງຖວາຍກຽດແກ່ອົງພຣະຜູ້ເປັນເຈົ້າ’ ” (ອພຍ 32:5)






ເຖິງວ່າຄຳໃນພາສາເຮັບເຣີ ເອໂລຮິມ *elohim* ຈະເປັນຈຳນວນຫລາຍ “ພະເຈົ້າ,” ແຕ່ຄຳນີ້ກໍ່ມັກຈະກ່າວເຖິງພຣະເຈົ້າອົງດຽວຢູ່ເລື້ອຍໆ: “ເຮົາຄືພຣະເຢໂຮວາ ພຣະເຈົ້າຂອງພວກເຈົ້າ [*elohim*], ຜູ້ທີ່ນຳພາພວກເຈົ້າອອກມາຈາກປະເທດເອຢິບ” (ອພຍ. 20:2).

ໃນຊ່ວງທີ່ໂມເຊບໍ່ຢູ່ກັບພວກເຂົາ ປະຊາຊົນຮ້ອງຂໍໃຫ້ອາໂຣນສ້າງ ພຣະເຈົ້າທີ່ສາມາດເບິ່ງເຫັນດ້ວຍຕາໄດ້ *elohim* ເຊິ່ງພວກເຂົາຈະນະມັດສະການ (ອພຍ. 32:1). ພວກເຂົາໄດ້ລືມພຣະບັນຍັດສິບປະການທີ່ໄດ້ຮັບ ແລະ ຄຳໝັ້ນສັນຍາຂອງພວກເຂົາທີ່ຈະເຊື່ອຟັງພຣະເຈົ້າ(ອພຍ. 24:7).



ຍ້ອນການລັງເລໃຈຂອງອາໂຣນໃນຄຳເວົ້າຂອງປະຊາຊົນ (ອພຍ. 32:2) ເຮັດໃຫ້ລາວໄດ້ປະຖິ້ມຄວາມເຊື່ອທີ່ມີ ແທນທີ່ຈະສືບຕໍ່ຈົງຮັກພັກດີກັບພຣະບັນຍັດຕໍ່ໄປ.

ແທນທີ່ຈະເຕືອນພວກເຂົາເລື່ອງການສ້າງຮູບເຄົາລົບເພື່ອຂາບໄຫວ້, ແຕ່ອາໂຣນຊ້ຳຜັດສ້າງງົວເຖິກນ້ອຍໂຕໜຶ່ງຂຶ້ນມາ ແລະ ປະກາດວ່າ, “ນີ້ແມ່ນພຣະເຈົ້າຂອງພວກເຈົ້າ [*elohim*] ອັນນີ້ແຫລະແມ່ນພະຂອງພວກເຮົາ ຜູ້ທີ່ໄດ້ນຳພາພວກເຮົາອອກມາຈາກເອຢິບ!” (ອພຍ. 32:4).



# ການສະເຫລີມສະຫລອງລູກງົວທອງຄຳ

"ໃນມື້ຕໍ່ມາພວກເຂົາໄດ້ຕື່ນແຕ່ເຊົ້າໆ ພວກເຂົາໄດ້ເຜົາສັດທັງໂຕຖວາຍບູຊາ ແລະ ນຳເອົາສັດໂຕອື່ນມາຂ້າກິນເພື່ອຄວາມສາມັກຄີທຳ ປະຊາຊົນຕ່າງກໍນັ່ງລົງແລະກິນດື່ມ ເຊິ່ງຕໍ່ມາມີການເຕັ້ນລຳຖວາຍບູຊາຮູບເຄົາລົບຢ່າງເຖິງໃຈ" (ອພຍ 32:6)



ໂດຍການສ້າງຮູບງົວທອງຄຳນີ້, ພວກເຂົາໄດ້ລົດຄວາມເປັນພຣະເຈົ້າຜູ້ຊົງຣິດອຳນາດອັນຍິ່ງໃຫຍ່ ໃຫ້ກາຍມາເປັນພຽງງົວເຖິກໂຕດຽວ, ນະມັດສະການສັດທີ່ສ້າງຂຶ້ນແທນພຣະຜູ້ສ້າງ (ໂຣມ. 1:23).

ພວກເຂົາຄິດແບບໄຮ້ເຫດຜົນວ່າ ຮູບເຄົາລົບນັ້ນຈະນຳທາງພວກເຂົາໄດ້. ບາງຄົນໃນພວກເຂົາອາດຄິດວ່າ ພຣະເຈົ້າ *elohim* ໄດ້ກາຍມາເປັນງົວເຖິກທອງຄຳແລ້ວ! (ອພຍ. 32:24)



ໃນຄວາມຈິງແລ້ວ ພວກເຂົາໄດ້ຫັນປ່ຽນຈາກການນະມັດສະການພຣະເຈົ້າມາເປັນການນະມັດສະການຜີມານຮ້າຍ (ພບຍສ. 32:17). ຖ້າພວກເຂົານະມັດສະການພຣະເຈົ້າ ພວກເຂົາກໍຈະເຕີບໂຕຂຶ້ນທາງດ້ານສິນລະທຳ ແລະ ຈະໄດ້ຮັບລັກສະນະນິໄສຄືກັບພຣະອົງ.

ໂດຍການນະມັດສະການຜີມານຮ້າຍ ພວກເຂົາເສື່ອມຊາມລົງ ແລະ ກໍຈະກາຍເປັນຄືກັບຜີມານທີ່ພວກເຂົາບູຊານັ້ນ.



ເມື່ອພວກເຮົາບໍ່ໄດ້ມອບຈິດໃຈຂອງພວກເຮົາໃຫ້ແກ່ພຣະຜູ້ສ້າງ, ແຕ່ຫັນໄປບູຊາສິ່ງອື່ນແທນ(ເຊິ່ງມີຢ່າງຫລວງຫລາຍ), ບໍ່ໄວກໍຊ້າ ທີ່ມັນຈະນຳພວກເຮົາໄປສູ່ຄວາມເສື່ອມຊາມທາງສິນລະທຳ.

# ຄວາມເສື່ອມຊາມໃນການບູຊາຮູບເຄົາລົບ

"ແລ້ວອົງພຣະຜູ້ເປັນເຈົ້າກໍບອກໂມເຊວ່າ: ຟ້າວກັບລົງໄປດຽວນີ້ ເພາະປະຊາຊົນຂອງເຈົ້າ ຄືພວກທີ່ເຈົ້າໄດ້ນຳອອກມາຈາກປະເທດເອຢິບນັ້ນໄດ້ເຮັດບາບ ແລະ ປະຖິ້ມເຮົາເສຍແລ້ວ (ອພຍ 32:7)



ການກົ້ມຂາບລົງທີ່ຮູບເຄົາລົບທີ່ມະນຸດສ້າງຂຶ້ນ (ບໍ່ວ່າຈະເປັນຕົວແທນຂອງພຣະເຈົ້າ, ພຣະເຢຊູ, ຫລືຜູ້ເຊື່ອຂອງພຣະອົງ) ແມ່ນການຝ່າຝືນກົດບັນຍັດຂອງພຣະອົງ (ອພຍ. 20:3-6) ແລະດ້ວຍເຫດນີ້ຈຶ່ງກາຍເປັນຄວາມບາບ ແລະ ຄວາມເສື່ອມຊາມ.

ການບູຊາຮູບເຄົາລົບໃນສະຕະວັດທີ 21st ແມ່ນຫຍັງ? ແມ່ນການບູຊາທຸກໆສິ່ງທີ່ມາແທນທີ່ພຣະເຈົ້າ. ຮູບເຄົາລົບແມ່ນສິ່ງທີ່ດຶງດູດອອກມາຈາກຈິນຕະນາການ, ແລະ ຄວາມຄິດຂອງພວກເຮົາ ຫລາຍກວ່າການເຄົາລົບພຣະເຈົ້າຕົວຈິງ. ເຊິ່ງເປັນສິ່ງທີ່ຄອບງຳຈິດໃຈຂອງພວກເຮົາ.



ພວກເຮົາກຳລັງນະມັດສະການຮູບເຄົາລົບອັນໃດ? ໃຫ້ພວກເຮົາຈົດລາຍຊື່ສິ່ງນັ້ນອອກມາ. ຕົວຢ່າງ: ຄວາມພູມໃຈໃນຕົນເອງ, ເງິນ, ອຳນາດ, ຕັນຫາ, ອາຫານ, ວຽກງານ, ສື່ສັງຄົມອອນໄລ ....

ການບູຊາຮູບເຄົາລົບເຫລົ່ານີ້ກ່ຽວຂ້ອງຫຍັງກັບພວກເຮົາ ຖ້າພວກເຮົາບູຊາມັນ? ບຸກຄະລິກຂະພາບຂອງພວກເຮົາ, ວິທີຄິດ, ອາລົມ, ແລະ ແມ້ແຕ່ຊີວິດທາງສັງຄົມຂອງພວກເຮົາກໍ່ຈະຖືກປ່ຽນແປງໄປ. ໃຫ້ພວກເຮົາແລກປ່ຽນກັບພຣະເຈົ້າໂດຍໃຫ້ຄວາມສຳພັນທີ່ແທ້ຈິງກັບພຣະອົງ ແທນຄວາມສຳພັນທີ່ຈອມປອມ ທີ່ບໍ່ສາມາດຊ່ວຍພວກເຮົາໃຫ້ລອດໄດ້.







# ການວິງວອນ

# ຂໍຊົງປ່ຽນພຣະພິໂລດອັນຮຸນແຮງຂອງພຣະອົງ

“ເປັນຫຍັງຈຶ່ງເຮັດໃຫ້ຊາວເອຢິບຕ້ອງໄດ້ເວົ້າໃຫ້ພຣະອົງວ່າ ພຣະອົງໄດ້ນຳປະຊາຊົນຂອງພຣະອົງອອກມາ ກໍ່ເພື່ອວາງແຜນຂ້າພວກເຂົາຢູ່ໃນເທິງພູນີ້ໂດຍທຳລາຍພວກເຂົາໃຫ້ໝົດສິ້ນໄປ!’ ” (ອພຍ 32:12)



ພຣະເຈົ້າໄດ້ບອກໂມເຊວ່າ “ເພາະວ່າປະຊາຊົນຂອງເຈົ້າ, ຜູ້ທີ່ເຈົ້າໄດ້ນຳອອກມາຈາກປະເທດເອຢິບນັ້ນ” (ອພຍ. 32:7).



ໂມເຊໄດ້ຕອບຢ່າງເໝາະສົມວ່າ: “ພວກເຂົາບໍ່ແມ່ນປະຊາຊົນຂອງເຮົາແຕ່ແມ່ນຂອງພຣະອົງ; ບໍ່ແມ່ນຂ້ານ້ອຍເປັນຜູ້ນຳພວກເຂົາອອກມາ ແຕ່ແມ່ນພຣະອົງ” (ອພຍ. 32:11). ພຣະອົງຈຶ່ງໄດ້ຖາມໂມເຊ ເພື່ອຈະທຳລາຍພວກເຂົາ (ອພຍ. 32:10), ແຕ່ໂມເຊໄດ້ຂໍໄວ້ ເພື່ອບໍ່ຢາກໃຫ້ພວກເຂົາຖືກທຳລາຍ



ພຣະພິໂລດຂອງພຣະອົງແມ່ນຍຸຕິທຳ, ແຕ່ໂມເຊຮູ້ວ່າ “ຄວາມເມດຕາຍ່ອມມີອຳນາດເໜືອການພິພາກສາ” (ຢາໂກໂບ 2:13). ຫລັງຈາກວິງວອນເພື່ອຊົນຊາດອິດສະຣາເອນ ແລະໝັ້ນໃຈວ່າພຣະອົງໄດ້ຊົງຢຸດພຣະພິໂລດຂອງພຣະອົງແລ້ວ ລາວຈຶ່ງໄດ້ກັບລົງຈາກພູໄປ (ອພຍ. 32:12-15). ແຕ່ເມື່ອຫລຽວເຫັນການກະທຳຄວາມຊົ່ວຂອງພວກເຂົາ ລາວຈຶ່ງໄດ້ທຳລາຍສັນຍາລັກແຫ່ງພັນທະສັນຍາ ນັ້ນກໍຄື ແຜ່ນສີລາ ພຣະບັນຍັດ (ອພຍ. 32:19).



ຫລັງຈາກໄດ້ຟັງຂໍ້ແກ້ໄຕອັນໄຮ້ປະໂຫຍດຂອງອາໂຣນແລ້ວ, ໂມເຊໄດ້ຕັດສິນໃຈຢ່າງເດັດຂາດທີ່ຈະຢຸດການກະບົດ ແລະ ການລ່ວງລະເມີດນັ້ນໂດຍການກ່າວແກ່ປະຊາຊົນວ່າ: ຜູ້ໃດທີ່ຢູ່ຝ່າຍອົງພຣະຜູ້ເປັນເຈົ້າ ຈົ່ງມາທາງພີ້. (ອພຍ. 32:20-28).

# “ຈົ່ງລົບຊື່ຂອງຂ້ານ້ອຍອອກຈາກປຶ້ມແຫ່ງຊີວິດ!”

“ກະລຸນາຍົກບາບໃຫ້ພວກເຂົາດ້ວຍ; ຖ້າບໍ່ດັ່ງນັ້ນຈົ່ງລົບຊື່ຂອງຂ້ານ້ອຍອອກຈາກປຶ້ມແຫ່ງຊີວິດ ປະຊາຊົນຂອງພຣະອົງສາເຖີດ!” (ອພຍ 32:32)






ໂດຍການວິງວອນໃນຄັ້ງທຳອິດນັ້ນ, ໂມເຊໄດ້ປ້ອງກັນການທຳລາຍລ້າງປະຊາຊົນໄວ້ໄດ້. ແຕ່ກໍ່ເປັນການຊັດເຈນແລ້ວວ່າ ພຣະເຈົ້າບໍ່ໄດ້ຊົງອວຍພຣະພອນພວກເຂົາຫລັງຈາກຄວາມບາບຄັ້ງນີ້. ເພາະສະນັ້ນ ໂມເຊຈຶ່ງໄດ້ວິງວອນເປັນຄັ້ງທີສອງ (ອພຍ. 32:30).

ໂມເຊໄດ້ເຕັມໃຈທີ່ຈະສູນເສຍຊີວິດອັນນິຣັນຂອງຕົນເອງ ຖ້າຫາກວ່າປະຊາຊົນບໍ່ໄດ້ຮັບການໃຫ້ອະໄພ (ອພຍ. 32:31-32). ຢ່າງໃດກໍ່ຕາມນີ້ບໍ່ແມ່ນການໃຫ້ອະໄພຕາມປົກກະຕິທີ່ໂມເຊໄດ້ວິງວອນຂໍ ເພາະຄັ້ງນີ້ ໂມເຊບໍ່ໄດ້ກ່າວຄຳວ່າ ”ໃຫ້ອະໄພ” ຕາມພາສາເຮັບເຣີ ແຕ່ລາວໃຊ້ຄຳວ່າ ”ແບກຮັບ" ຄວາມບາບຂອງປະຊາຊົນ.

ເຊິ່ງມີໃນວ່າ ພຣະເຈົ້າຈະຊົງແບກຮັບບາບກຳຂອງປະຊາຊົນໄວ້ກັບພຣະອົງເອງ ແລະ ຈະຊົງຈ່າຍຄ່າໄຖ່ບາບເຫລົ່ານັ້ນ ກໍ່ຄືຄວາມຕາຍ, (ອຊຢ. 53:6;
ໂຣມ. 6:23). ນີ້ແມ່ນສິ່ງທີ່ພຣະເຢຊູຊົງກະທຳຢູ່ເທິງໄມ້ກາງແຂນ, ພຣະອົງໄດ້ແບກຮັບບາບຂອງພວກເຮົາໄວ້ແທນທີ່ພວກເຮົາຈະເປັນຄົນໄດ້ຮັບບາບກຳນັ້ນ (1 ປຕ. 2:24).



EGW (Patriarchs and Prophets, p. 315)

“ລະຫວ່າງຊ່ວງເວລາແຫ່ງການລໍຄອຍນີ້, ມີເວລາໃຫ້ພວກເຂົາຕຶກຕອງເຖິງພຣະບັນຍັດຂອງພຣະເຈົ້າທີ່ພວກເຂົາໄດ້ຍິນ, ແລະຕຽມຈິດຕຽມໃຈໃຫ້ພ້ອມ ເພື່ອທີ່ຈະຮັບການເປີດເຜີຍເພີ່ມເຕີມ ທີ່ພຣະອົງອາດຈະປະທານໃຫ້ກັບພວກເຂົາ. ພວກເຂົາບໍ່ໄດ້ມີເວລາຫລາຍສຳລັບສິ່ງທີ່ຈະເກີດຂຶ້ນນີ້; ແລະ ຖ້າວ່າພວກເຂົາສະແຫວງຫາຄວາມເຂົ້າໃຈທີ່ຊັດເຈນຍິ່ງຂຶ້ນກ່ຽວກັບຂໍ້ກຳນົດຂອງພຣະເຈົ້າ ແລະ ຖ່ອມໃຈລົງຕໍ່ພຣະພັກຂອງພຣະອົງ, ພວກເຂົາກໍ່ຄົງຈະໄດ້ຮັບການປົກປ້ອງຈາກການລໍ້ລວງ. ແຕ່ວ່າພວກເຂົາບໍ່ໄດ້ເຮັດແບບນັ້ນ ແລະ ໃນຕໍ່ມາບໍ່ດົນ ພວກເຂົາກາຍເປັນຄົນປະໝາດ, ຂາດຄວາມໃສ່ໃຈ ແລະ ໄຮ້ກົດໝາຍ. [...]

ພຽງແຕ່ພວກເຂົາຮູ້ສຶກເຖິງຄວາມໝົດຫວັງ ບໍ່ມີຜູ້ນຳ, ພວກເຂົາຈຶ່ງຫວນກັບໄປກາຄວາມເຊື່ອທີ່ງົມງາຍຄືເກົ່າ, ປະຊາຊົນປາຖະໜາຮູບເຄົາລົບບາງຢ່າງ ເພື່ອເປັນຕົວແທນຂອງພຣະເຈົ້າ ແລະ ນຳໜ້າພວກເຂົາແທນໂມເຊ.